ນະວະນິຍາຍ ທີ່ສ້າງເປັນລະຄອນໂທລະພາບ ມາແລ້ວ



# ອາຖັນ
# ແຫ່ງພົງໄພ

ດອກເກດ

ແກ້ຄຳຜິດ:

| ຄຳຜິດ | ຖືກ |
|---|---|
| - ໜ້າ 47 ແຖວທີ 17: “ບາດແລ້ວ ຊິສົ່ງຂ່າວຫາອ້າຍຄູດອກ... | ອ້າຍຄູນ |
| - ໜ້າ 67 ແຖວທີ 1: ຂຶ້ນມາຈ່ຍູ້ຄູ່ຫອຍ... | ຄໍ |
| - ຫນ້າ 79 ແຖວ 18: ...ຜີນແຊມດອກເລົ່າ... | ເລົາ |
| - ຫນ້າ 82 ແຖວ 12: “ຜະແນກນັບຊີ.... | ບັນຊີ |
| - ຫນ້າ 118 ແຖວ 3: ຄວາມຢຸດຕິທຳ. | ຍຸດຕິທຳ |
| - ຫນ້າ 130 ແຖວ 9: ອ້າຍຄູຍິ້ມຕອບຮັບສອງສາວ... | ອ້າຍຄູນ |
| - ຫນ້າ 149 ແຖວ 5: ...ຂອງຮຸ້ງກິນນໍ້າ... | ຮຸ້ງກິນນໍ້າ |
| - ຫນ້າ 157 ແຖວ 7: ...ມັດສອກໄຄວ່ຫລັງ... | ໄຂວ່ |

ພິມເທື່ອທີ 2

# ອາຖັນ ແຫ່ງພິງໄພ

ນະວະນິຍາຍ ໂດຍ ດອກເກດ

ພິມເທື່ອທີ 1 ປີ 1995, ໄຜ່ໜາມການພິມ, ຈຳນວນ 3000 ຫົວ
ທະບຽນພິມ: 10 ພທປ 221295
ຄະນະບັນນາທິການ: ດາລາ ກັນລະຍາ, ອຸທິນ ບຸນຍາວົງ

ພິມເທື່ອທີ 2, ມິຖຸນາ 2006
ທະບຽນພິມ: 096 ພຈ 22062006
ຈຳນວນ: 3000 ຫົວ
ພິມທີ່: ຈຳປາ ການພິມ,ໂທ (+856-21) 452924

ພິສູດອັກສອນ: ວິລະສັກ ວີຣະວົງ
ອອກແບບຈັດໜ້າ: ດອກເກດການພິມ
ພາບປົກ ແລະພາບປະກອບ: ສະມິດທິ ທະນານິທິໂຊດ, ດວງແຂ ບຸນຍາວົງ
ຈັດພິມໂດຍ ບໍລິສັດ ດອກເກດການພິມ ຈຳກັດຜູ້ດຽວ

© ສະຫງວນລິຂະສິດ ດວງເດືອນ ບຸນຍາວົງ

ຈັດຈຳໜ່າຍ ໂດຍ ບໍລິສັດ ດອກເກດການພິມ ຈຳກັດຜູ້ດຽວ
ໂທ/ແຟກ: (+856-21) 2637 48, e-mail:dokked@veetoo.net
ເລກທີ 068, ຖະໜົນຫລວງພະບາງ, ບ້ານສີຖານເໜືອ,
ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ.

ນະວະນິຍາຍ ທີ່ສ້າງເປັນລະຄອນໂທລະພາບ ມາແລ້ວ

# ຈາກຝັນ ແຫ່ງພົງໄພ

" ສະທ້ອນສ້ຽວໜຶ່ງແຫ່ງຊີວິດໄວໜຸ່ມ ອຸດົມຄະຕິຂອງຜູ້ຂຽນຈະແຈ້ງ
ເປີດເຜີຍ 1 ໃນຮ້ອຍ ຫລື 1 ໃນພັນ ອາດແຝງຕົວຢູ່ແຫ່ງໃດແຫ່ງໜຶ່ງ
ອາຖັນແຫ່ງພົງໄພ ກະຕຸ້ນຄວາມຄິດສ້າງສັ້ນ ຂອງຄົນໄວນີ້
ທີ່ຈະຮັບຜິດຊອບອະນາຄົດຂອງປະເທດ ໃນອະນາຄົດ"
ອຸທິນ ບຸນຍາວົງ

" ເປັນເລື່ອງສັ້ນ ອ່າວຍາວ ທີ່ຫາອ່ານໄດ້ຍາກໃນອຸທະຍານອັກສອນ
ຂອງລາວເຮົາ. ຄວາມຮັກ ແລະຄວາມຫວັງ ມີຢູ່ໃນຫົວໃຈຄົນໜຸ່ມສັນໃດ
ອາຖັນແຫ່ງພົງໄພ ກໍມີສິ່ງນັ້ນ ແກ່ຜູ້ອ່ານ "
ຮຸ່ງອະລຸນ ແດນວິໄລ

" ສຳນວນກົງໄປກົງມາ ເນື້ອເລື່ອງທັນສະໄໝຖືກກັບບັນຫາປັດຈຸບັນ
ປ່າດົງພົງໄພແມ່ນຊັບພະຍາກອນລວມຂອງມວນມະນຸດ
ຄວາມເຂົ້າໃຈທຳມະຊາດຂອງປ່າ ຄົງມີສ່ວນຊ່ອຍຍືດອາຍຸຂອງປ່າຕໍ່ໄປ
ອາຖັນແຫ່ງພົງໄພ ຈະພາທ່ານໄປສຳຜັດກັບອາລົມຈິດ
ແລະຈິນຕະນາການ ເລີກລັບຊວນຝັນ "
ດາຣາ ກັນລະຍາ

## ເຖິງຜູ່ອ່ານ...

ໄວໜຸ່ມສາວ ເປັນໄວທີ່ອ່ອນໄຫວ ແຕ່ກໍແຝງໄປດ້ວຍພະລັງແຫ່ງໄຝ່ຝັນ, ຂ້ອຍເຊື່ອແນວນັ້ນ ແລະຖ້າພວກເຂົາໄດ້ອ່ານອາຖັນແຫ່ງພົງໄພແລ້ວ ຫົວໃຈຂອງຄົນໜຸ່ມ ຈະຕ້ອງຮ້ອງໄຫ້ຢູ່ພາຍໃນ ຢ່າງແນ່ນອນ ດັ່ງທີ່ຂ້ອຍເອງໄດ້ສຳຜັດມາແລ້ວ ເມື່ອອ່ານຄັ້ງທຳອິດ ຄັ້ງທີສອງ... ຍ້ອນຄວາມສະທ້ານໃຈ ຕໍ່ຄວາມເປັນໄປໃນພົງໄພ.

"ອາຖັນແຫ່ງພົງໄພ" ເລື່ອງຍາວຂະໜາດສັ້ນ ຂອງດອກເກດ ເລື່ອງນີ້ ໄດ້ສ້າງຄວາມປະທັບໃຈມາແລ້ວ ໃນຮູບແບບລະຄອນໂທລະພາບ ໃນປີ 1997 ໂດຍຜູ້ສ້າງຈາກ ກົມຮູບເງົາ ເມື່ອຄັ້ງໄດ້ອ່ານສະບັບຈັດພິມຄັ້ງທຳອິດ ໃນປີ 1995.

ແຕ່ຢ່າງໃດກໍດີ ການໄດ້ອ່ານສຳນວນພັນລະນາ ອັນດັ້ງເດີມຂອງນັກປະພັນອີກຄັ້ງນຶ່ງ ເປັນໂອກາດອັນດີ ທີ່ເຮົາຈະໄດ້ຊົມລົດຊາດອຳນາດຂອງພາສາ ແລະຕົວໜັງສື

"ອາຖັນແຫ່ງພົງໄພ" ອາດເປັນນິຍາຍແນວສັດຈະທຳ ຂອງລະບອບສັງຄົມນິຍົມຢ່າງແທ້ຈິງກໍວ່າໄດ້ ເພາະມັນຮັບໃຊ້ອຸດົມການຂອງຊາວຜູ້ອອກແຮງງານ ແລະສະທ້ອນໃຫ້ເຫັນແນວຄິດຈິດໃຈຂອງປະຊາຊົນໃນຊົນນະບົດ ພ້ອມນັ້ນ ບົດເລື່ອງຍັງແບກຫາບພາລະກິດອັນຍິ່ງໃຫຍ່ຂອງຊາດ ກໍຄືເປົ້າໝາຍກໍ່ສ້າງຄູຣຸ່ນໃໝ່ ໃຫ້ເປັນ ຄູຜູ້ມີ ທັງອຸດົມການ ແລະຄຸນນະທຳ

ຫວັງຢ່າງຍິ່ງວ່າ ປຶ້ມເຫລັ້ມນີ້ ຈະໄປຢູ່ທົ່ວທຸກຈອກທຸກແຈ ແລະຢູ່ໃນຫົວໃຈຂອງຊາວໜຸ່ມຍິງຊາຍ ຜູ່ກຳລັງສະແຫວງຫາຄວາມເພີດເພີນຈາກວັນນະກຳແຫນນຳເມົາ

*ດວງແຂ ບຸນຍາວົງ*

*ດອກເກດການພິມ, ມິຖຸນາ 2006*



ອຸທິດແດ່

ຊາວໜຸ່ມຍິງຊາຍທັງຫລາຍ

ທີ່ພວມລອຍໃນກະແສທານ

ແຫ່ງການຕໍ່ສູ້ເພື່ອອຸດົມການ

ອັນສູງສົ່ງ...


จากุม
แห่งผาไพ

# ເພິ່ນມາຢາມ



## ໄປເອີ້ນອ້າຍຄູມຶງມາໄວ ບັກກີ ໄປ ! ໄປດຽວນີ້ !

"ເພິ່ນຢູ່ໃສລະ ?" ເດັກນ້ອຍໄວສິບປີ ຜູ້ຊື່ວ່າກີ ຖາມ ຄືນສຽງເຕືອຍໆ ຕ່າງກັບສຽງຂອງຜູ້ຖາມ ເຊິ່ງຟັງຊື່ໆ ກໍຮູ້ວ່າ ຮ້ອນຮົນຮີບດ່ວນສົມຄວນ. ບັກນ້ອຍມີໜ້າມຸມເມົ້າ ນຸ່ງສິ້ງຂາ ສັ້ນຕິວດຽວ ເຜີຍເອິກຈ່ອຍບາງແນມເຫັນຮ່າງກະດູກຂ້າງເປັນ ລັ່ນ ກີເງີຍໜ້າຂຶ້ນ ລະແສງຕາຈາກຂຸມ ແລະຕອບດ້ວຍທ່າ ທາງບໍ່ຮ້ອນບໍ່ຮົນ ນຳຄຳສັ່ງຂອງ ປ້າພອນ ທັງໆທີ່ວ່າປ້າ ພອນຜູ້ນີ້ ເປັນຜູ້ສຳຄັນທີ່ສຸດໃນບ້ານນີ້ກໍວ່າໄດ້ ເພາະປ້າພອນ ແມ່ນແມ່ຂອງອ້າຍຄູນ ສະມາຊິກຄົນໜຶ່ງ ໃນຄະນະປົກຄອງ ເມືອງ ທີ່ຫາກໍເລືອກຕັ້ງກັນໄດ້ຫວ່າງໜຶ່ງ. ແຕ່ນັ້ນລະ ສຳລັບ ກີແລ້ວ ການທີ່ອ້າຍຄູນ ຊິໄປເປັນອີ່ຫຍັງ ສຳຄັນທໍ່ໃດແລ້ວ ບໍ່ໄດ້ຢູ່ເຮືອນກັບແມ່ ເຊິ່ງເປັນໝ້າຍມາຫລາຍປີ ແລ້ວນັ້ນ ບໍ່ໄດ້ ເຮັດໃຫ້ກີຮູ້ສຶກແປກຕ່າງເດືອດຮ້ອນ ແນວໃດ ເພາະຍາມໃດ ປ້າພອນ ກໍຍັງເປັນປ້າພອນ ຜູ້ອາລີອາລອບ ຕໍ່ລູກຫລານ ລູກ ເລັກເດັກນ້ອຍໃນບ້ານຄືເກົ່າ. ໂດຍຕຳແໜ່ງໜ້າທີ່ແລ້ວ ປ້າພອນ ກໍເປັນຄະນະສະຫະພັນແມ່ຍິງບ້ານ ຜູ້ອາວຸໂສທີ່ສຸດອີກ.

ຕາມທຳມະດາ ປ້າພອນເປັນຄົນໃຈເຢັນທ່າທີ ສະຫງົບສະຫງ່ຽມ ສົມຖານະສົມໄວລ່ວງ 50 ຂອງເພິ່ນ. ແຕ່ທ່າທາງທີ່ຍ່າງໄວ່ໆມາ ແລ້ວຮ້ອງສັ່ງ ກີ ທັງໆທີ່ບໍ່ທັນຜ່ານຮອດຮົ້ວຂອງໂຮງຮຽນ ມາຮອດໂຕເດັກນ້ອຍນັ້ນ ເຮັດໃຫ້ກີຕ່າງໃຈບໍ່ໜ້ອຍ. ເດັກນ້ອຍເງີຍໜ້າຂຶ້ນ ຈາກຂຸມທີ່ພວມຂຸດຢູ່ແຈເບື້ອງໜຶ່ງຂອງເດີ່ນໂຮງຮຽນ ເພື່ອເອົາໄວ້ຫລິ້ນໂຍນຂຸມກັບໝູ່ຍາມເລີກຫລິ້ນ. ໝູ່ເດັກນ້ອຍອື່ນໆຍັງບໍ່ທັນມາ ແລະກະໂຕອ້າຍຄູຄົນດຽວຂອງໂຮງຮຽນ ທີ່ສອນຄວບທັງສາມຫ້ອງຊັ້ນປະຖົມນັ້ນ ກໍບໍ່ເຫັນຮອດເງົາຄືກັນ ກີຄຶດເອົາເອງວ່າ ໂຮງຮຽນ ຄົງບໍ່ທັນເຂົ້າງ່າຍດອກ.

ປ້າພອນຍ່າງວັບໆມາຢຸດຢູ່ຫ່າງກີປະມານສອງສາມວາເກົ້າຜົມເປີຍຂອງລາວ ອ່າວເຕື່ອຍຕົກງ່ອນ, ລາວນຸ່ງເສື້ອຜົນໃຫມ່ລາຍດອກຈິບງາມ ຄືຫາກໍມາແຕ່ໃນເມືອງໃນນາ ແຕ່ທ່າທາງ ບອກວ່າຮ້ອນໜົກຮ້ອນໃຈເອົາກະດໍ້. ຢຸດຍ່າງແລ້ວແສງຕາຂອງນາງ ຊໍ້າແລລວາດໄປຮອບໆເດີ່ນ ຜ່າແປວແດດສີເຫລືອງຄຳຂອງຍາມເຊົ້າອ່າວສວາຍ ແລ້ວຢຸດຈົ້ງ ຢູ່ອາຄານໂຮງຮຽນຂອງບ້ານ. ກີເຫັນວ່າແສງຕາຂອງປ້າພອນ ເປັນມັນຍິບຍັບ ຄືຈະສົ່ງແສງອອກມາຕື່ມພະລັງໃຫ້ແສງແດດ ວາດໃດວາດໜຶ່ງ. ໂຮງຮຽນເປັນເຮືອນຕູບຕິດພື້ນ ມຸງຫຍ້າ, ພື້ນດິນ

ແກ່ນຮາບພຽງ ຍ້ອນຖືກຕີນເດັກນ້ອຍຫລາຍສິບຄູ່ຢຽບຢ່ຳທັບຖູມາຫລາຍຟ້າຫລາຍປີ ແລະຝາໄມ້ເຮັຍ ສານລາຍສອງນັ້ນ ເກົ່າຜຸມີຮູໂຈ່ໂຫວ່ໂຈ່ເຫວ່ ຍ້ອນຖືກສອກ ແລະປາຍຕີນຂອງເດັກນ້ອຍຕຳຕ້ອງແດ່ ແລະຍ້ອນຄວາມຊະລາພາບຕາມການເວລາຂອງໄມ້ເນື້ອອ່ອນ ທີ່ບໍ່ທົນແດດທົນຝົນ ຄືໄມ້ເນື້ອແຂງ. ເບິ່ງຄັກໆກົກເສົາທັງແປດຂອງມັນຄືວ່າ ເຊັວລົງຫລາຍກວ່າປີກາຍຊ້ຳຈັກຈະຕັ້ງຢູ່ກຸ້ມປີ ຊ້ຳບໍ່ ?

"ສູຢາກໄດ້ໂຮງຮຽນໃຫມ່ບໍ່ລະຣິ ?" ປ້າພອນຕັ້ງຄຳຖາມ ທີ່ກົບໍ່ຄຶດບໍ່ຝັນວ່າຊິໄດ້ຍິນ ທັງບໍ່ເຂົ້າໃຈວ່າເປັນຫຍັງແມ່ປ້າພອນຈຶ່ງມາຖາມຕົນແນວນີ້ ກົບໍ່ທັນໄດ້ວ່າຫຍັງດອກປ້າພອນຄືວ່າຄຶດອອກກ່ອນ ລາວເລັ່ງເດັກນ້ອຍໃຫມ່ວ່າ:

"ໄປຊອກອ້າຍຄູຜັນສູ ມາໃຫ້ປ້າໄວໆ ໄປດຽວນີ້, ຄືຊິຢູ່ແຄມຫນອງຟາກທົ່ງພຸ້ນ ລະຫັ້ນ ທາງກົກຂາມປ້ອມ ພຸ້ນກໍ້ເພິ່ນມັກໄປນ່ະ... ບອກວ່າ ປ້າມີວຽກຟ້າວຊັ້ນເດີ !"

"ວຽກຟ້າວອີ່ສັງລະ ?" ກົເອີ່ຍປາກຖາມຄືນ ເພາະຫລີກບໍ່ເວັ້ນແລ້ວ ປ້າພອນຮູ້ຮອດແກ່ວອ້າຍຄູອີກ. ຖ້າເຂົາຊິວ່າບໍ່ຮູ້ ແລ້ວບໍ່ໄປກໍບໍ່ໄດ້ ທ້າວນ້ອຍລຸກຂຶ້ນມ້ຽນໄມ້ແຫລມທີ່ໃຊ້ເປັນແນວຂຸດດິນ. ແສງຕາແນມນຳປ້າພອນ ແລະເຂົ້າໃຈພໍລາງໆແລ້ວວ່າ ຕ້ອງມີແນວສຳຄັນເກີດຂຶ້ນ ແລະມີອ້າຍຄູຜັນຄົນດຽວເທົ່ານັ້ນ ທີ່ຈະຊ່ອຍແກ້ໄຂໄດ້.

"ຊິມີຄະນະຜູ້ແທນ ແຕ່ວຽງມາຢ້ຽມຢາມບ້ານເຮົາ... ມີຄົນຕ່າງປະເທດ ປາກພາສາລັ່ງໆ ກິດໆ ມານຳ ໃຫ້ອ້າຍຄູສູ ມາເວົ້າກັບເພິ່ນ ຈຶ່ງຊິໄດ້ການຊ່ອຍເຫລືອ. ເອົາລະເວົ້າໄປ ຫລາຍ ມຶງບໍ່ຈື່ດອກ. ຮີບໄປບອກອ້າຍຄູມຶງໃຫ້ເມືອເຮືອນ ພຸ້ນໂລດເດີ້, ເອີ້ ຢ່າລືມຕີກະລໍສາມເທື່ອໃຫ້ແດ່. ປ້າຕ້ອງເອີ້ນ ປະຊຸມດ່ວນນຳ !"

"ອ້າວ ຊັ້ນກະບໍ່ໄດ້ເຂົ້າໂຮງຮຽນລະບໍ້ !" ກິ ເຕັ້ນດ້ວຍ ຄວາມດີໃຈ ເພາະຕີກະລໍສາມເທື່ອ ໝາຍເຖິງໂຮມໝົດບ້ານ ແບບດ່ວນ ແລະເດັກນ້ອຍກໍມີສິດໄປຟັງນຳ ເພາະອ້າຍຄູ ກໍໄປຄືກັນ !

"ເອີ້... ເອີ ບໍ່ຕ້ອງເຂົ້າແຫລ້ວ ຊິເອົາອ້າຍຄູສູໄປປະຊຸມ ນຳເດ້ !"

ເປັນອັນຈະແຈ້ງດີແລ້ວ ກິຈຶ່ງອອກນຳຫາອ້າຍຄູ. ຄຳ ວ່າໂຮງຮຽນໃໝ່ ຕຳຫົວໃຈເດັກນ້ອຍຢູ່ໜ້ອຍໜຶ່ງ ເພາະ ຫ້ອງຮຽນບໍ່ມີຝາກັ້ນຫ້ອງ ຫລັງຄາມຸງຫຍ້າ ຂະໜາດສອງຫ້ອງ ທີ່ເດັກນ້ອຍເກືອບສາມສິບຊີວິດ ອາໄສຫລົບແດດ ຫລົບຝົນຢູ່ນີ້ ເກືອບວ່າ ບໍ່ບັງກັ້ງຫຍັງໄວ້ເລີຍ. ເວລາມີແດດສ່ອງ ເດັກນ້ອຍ ກໍອົບອຸ່ນຮ້ອນໆຮຸ່ມໆ ເກືອບເທົ່າກັບເວລາຫລິ້ນຢູ່ເດີ່ນ ແລະ ເວລາຝົນຕົກພວກເຂົາກໍຊຸ່ມອືນໄປເຄິ່ງຄີງ. ເວົ້າງ່າຍໆວ່າ ມັນ ບັງແດດໄດ້ແດ່ ກໍແມ່ນຕອນໃກ້ໆໂຮງຮຽນຊິເລີກຕອນທ່ຽງຕາ

ເວັນຂຶ້ນຊີ່ ແລະບັງຝົນໄດ້ ກໍຕໍ່ເມື່ອຝົນບໍ່ຕົກເທົ່ານັ້ນ !

ບ່າວຄູຜັນ ເປັນອ້າຍບ່າວໂສດໄວຊາວສີ່-ຊາວຫ້າ ມາຢູ່ບ້ານ "ຫາດໂພ" ໄດ້ສອງປີກວ່າ ຍ່າງເຂົ້າປີທີສາມແລ້ວ. ເຂົາຮຽນສຳເລັດ ໂຮງຮຽນສ້າງຄູຊັ້ນກາງຈາກ ສະຫວັນນະເຂດ ແລະໄດ້ຊັບຊ້ອນມາສອນຢູ່ບ້ານຫາດໂພ ໃນແຂວງນີ້ ຕາມຄວາມປະສົງຂອງເຂົາເອງ !

ຜັນມັກຈະຜົກຫມູ່ ມາຊິດເບັດເອົາປາຢູ່ຫນອງຕີນທົ່ງ ໄປແຕ່ງກິນເສີມພາເຂົ້າຊອຍແມ່ຮັກຄືປ້າພອນ ເຊິ່ງຜູກຮັບ ເອົາເຂົາເປັນລູກຮັກ ນັບແຕ່ມື້ທຳອິດທີ່ເດີນທາງມາຢູ່ຫາດໂພດ້ວຍການລ່ອງເຮືອນ້ອຍລົງມາຕາມນ້ຳຊັນ ຕັ້ງແຕ່ ເມືອງເກົ່າ ພ້ອມກັບ ອ້າຍຄູນ ລູກຊາຍປ້າພອນ ທີ່ເປັນຄະນະປົກຄອງເມືອງ ທັງເປັນຜູ້ເຊັນຮັບເອົາໃບນຳສົ່ງຂອງເຂົາ ໃນມື້ທີ່ຜັນໄປສະເຫນີໂຕ ເມື່ອທາງບ້ານບໍ່ທັນໄດ້ກະກຽມບ່ອນພັກອາໄສໃຫ້ "ອ້າຍຄູ" ຜູ້ມາໃຫມ່, ປ້າພອນຜູ້ອາລີ ກໍພ້າວຮັບເອົາເຂົ້າຢູ່ໃນເຮືອນ ນຳໂລດ. ທຳອິດ ກໍວ່າຢູ່ຊາມຊາ ແຕ່ຢູ່ໄປຢູ່ມາໄດ້ຕັ້ງສອງປີກວ່າແລ້ວ ທາງບ້ານກໍຍັງບໍ່ເຕືອງ ວ່າຊິປຸກເຮືອນນ້ອຍໃຫ້ເຂົາ ອ້າຍຄູຫນຸ່ມ ຈຶ່ງໄດ້ຮຽນຮູ້ວ່າທີ່ແທ້ແລ້ວ ແມ່ນ ຮີດຫນຶ່ງຂອງບ້ານນີ້ ທີ່ຜູ້ຫນຸ່ມສາວໂສດຈະອອກຈາກຢ້າວອອກເຮືອນຢູ່ຜູ້ດຽວບໍ່ໄດ້, ຄະລຳວ່າຊັ້ນ ! ມື້ໃດ ໄດ້ລູກໄດ້ເມຍພຸ້ນລະ ຫມົດບ້ານຈຶ່ງຊິພ້ອມໃຈກັນ ປຸກໃຫ້ຖ້າຜູ້ກ່ຽວຕ້ອງການ ຖ້າໄດ້ກັບລູກສາວ

ຜູ້ອາວມີຖານະດີແດ່ ກໍອາດເຂົ້າໄປຢູ່ນຳພໍ່ເຖົ້າແມ່ເຖົ້າ ຕາງຮຽນຮູ້ຊີວິດ ແລະວຽກໄຮ່ການນາໄປນຳ. ທີ່ແທ້ແລ້ວ ຜັນບໍ່ໄດ້ເດືອດຮ້ອນຫຍັງເລີຍ ເຂົາເຫັນວ່າຢູ່ນຳປ້າພອນ ສະດວກດີທຸກຢ່າງ ເຮືອນຊານກວ້າງຂວາງ ມີຫ້ອງນອນ ສຳລັບເຂົາຫ້ອງໜຶ່ງ ເພາະອ້າຍຄູນ ລາວມີເມຍແລ້ວ ເມຍລາວກໍຍັງຢູ່ເຮືອນນຳພໍ່ແມ່ພຸ້ນ ປ້າພອນ ເອົາຫລານທ່າງໆມາລ້ຽງສອງຄົນ ພວມສອນບ່າວສອນສາວ ແລະຜູ້ທີ່ຮ້ອນໃຈກວ່າເຂົາ ແມ່ນ ປ້າພອນນັ້ນເອງ !

ໜ້ານ້ຳແຄມໜອງຍາມເຊົ້າ ສະຫງົບງຽບ ໃບໄມ້ແຫ້ງປະດັບຜິວນ້ຳກະເທືອນຄ່ອຍໆ ເມື່ອມີລົມພັດລູ່ມາຕາ ຜັນຈຶ່ງຊຶງເບິ່ງອາການເໜັງຍຸດໆຂອງທອຍເບັດ ທີ່ເຂົາຢ່ອນລົງແຊ່ນ້ຳໄວ້ຕັ້ງດົນທັງກັ້ນໃຈດ້ວຍຄວາມຕື່ນເຕັ້ນ "ໃຫ້ມັນສວາບເຂົ້າໄປຄັກໆກ່ອນ !" ຜັນຫ້າມໃຈຕົນເອງ, "ໂຕໃຫຍ່ສົມຄວນລະໜີ້ ຕອດຊື່ໆຍັງແຮງປານນີ້ ! ຄືຊິແມ່ນປາຄໍ່... ນີ້ແລງໃຫ້ແມ່ຕົ້ມໃສ່ໃບຂາມອ່ອນ ຊິດຄັກໆກ່ອນ! " ຜັນຄຶດຮຸ່ມໆ ດ້ວຍຄວາມອອນຊອນໃຈ ແຕ່ໃນທັນໃດນັ້ນ:

"ອ້າຍຄູ... ອ້າຍຄູຜັນ... ຢູ່ໃສ ? ອ້າຍຄູ ! ປ້າພອນໃຫ້ມານຳອ້າຍຄູ !" ສຽງທອງໃສຂອງກີ ດັງແຜດຂຶ້ນພໍປານຟ້າຜ່າຍາມແລ້ງ ທຳລາຍຄວາມສະຫງົບເໜືອໜ້ານ້ຳ ແລະຟອງສຽງອັນແຫລມທອງ ຂອງເດັກນ້ອຍນີ້ ຄົງມຸດຊອດລົງພື້ນ

ນ້ຳນຳປາທີ່ເກືອບໄຊກຮ້າຍທີ່ວ່ານັ້ນ ເລີຍລອດພົ້ນ ຈາກດວງເບັດນິລະນະນັ້ນຊ້ຳ. ສຸດສຽງຮ້ອງສຽງບາດຕີນ ຍ່ຳຕາມໃບໄມ້ແຫ້ງ ກໍດັງຄວາກໆ ໃກ້ເຂົ້າມາຍັງຈຸດທີ່ອ້າຍຄູເຂົາອິດສາເລືອກໄວ້ຢ່າງຄັກ. ກິຄິງສັງເກດເຫັນຮອຍຕີນຕາມທາງຫຍ້ອດິນໜຽວປຽກ ທີ່ລັດລຽບມາຫາຕົ້ນໄຊນ້ອຍ ບ່ອນຜັນເຄີຍໜານມາແລ້ວຫລາຍເທື່ອ.

"ອ້າຍຄູ...ອ້າຍຄູຜັນ...ຮວ້າຍ ຢູ່ຕາຍທາງໃດເກາະ? ປ້າພອນໃຫ້ມານຳ ເພິ່ນສັ່ງໃຫ້ເມືອໄວໆ !"

ແສງຕາຂອງກິນ້ອຍ ຄະໂນະກັບແສງຕາຊຽວປີ້ງຂອງອ້າຍຄູທີ່ດິ່ງມາໃສ່ ເມື່ອເຂົາໂປໂລຫົວພົ້ນພຸ່ມຫຍ້າສຸດທ້າຍກ່ອນຮອດຕົ້ນໄຊ.

"ບັກກິ ! ມຶງເວົ້າຄ່ອຍກວ່ານີ້ບໍ່ໄດ້ຫວາ ? ປາກູເປີດໜີດແລ້ວ ! ປາຄໍ່ໃຫຍ່ພວມຊິສວາບນາ ມັນຕອດມຸບໆຢູ່ຕັ້ງດົນ ໂອ້ຍ ນັ່ງເມື່ອຍດາຍດອກ". ຜັນຂຶ້ນສຽງດ້ວຍຄວາມໂມໂຫ ແຕ່ຍັງບໍ່ຍອມຍົກຄັນເບັດ ເຂົາທັງເວົ້າທັງເສືອດຕາລຶງເບິ່ງທອຍເບັດ ພໍປານພວມເຫັນປາຄໍ່ໂຕນັ້ນລອຍລຸດໆ ຫ່າງຈາກດວງເບັດເຂົາໄປ. ກິອຶກອັກ ເຂົາເສຍໃຈແຮງຄືກັນ ເພາະຮູ້ດີປາໂຕຫລຸດເບັດນັ້ນ ກໍໂຕໃຫຍ່ສົມຄວນແລ້ວ ແຕ່ໂຕພວມຊິສວາບເບັດນີ້ ແຮງຕ້ອງໃຫຍ່ກວ່າໂຕມັນຫລຸດອີກ. ຊັ້ນຄວາມເສຍດາຍກໍຕ້ອງທະວີຂຶ້ນຫລາຍຕໍ່ !

"ປ້າພອນວ່າຫຍັງເກາະ !" ຜັນຖາມຊ້ຳ ເມື່ອເຫັນເດັກນ້ອຍມິດຈັ່ງງັ່ງໄປ ເຂົາຄ່ອຍໆຍົກຄັນເບັດຂຶ້ນ ດ້ວຍທ່າທາງອາວອນ ແນ່ລະມັນແຈ້ງກວ່າກາງເວັນອີກວ່າ ບໍ່ມີຫຍັງຫ້ອຍໂຕ່ງເຕັ່ງຢູ່ປາຍສາຍເອັນ. ດວງເບັດເປົ່າເປົ່າ ຟິ່ງລອຍຂຶ້ນຕາມແຮງຊິດເຫຍື່ອຂີ້ດັກແດ້ ຂາດແຫວ່ງໄປແທ້ ຊາຍໜຸ່ມຄວາຈັບມາແຍງ ແລະອ້າງນຳກິ ດ້ວຍຄວາມເຫລືອໃຈ.

"ໂຕເບິ່ງແມ້ຫນີ້ ມັນສວາບໄປຕັ້ງເຄິ່ງແລ້ວນ່າເອີລະ ! ຢ່າມັນສາ ວ່າແນວໃດ ? ປ້າພອນໃຫ້ມາຊອກອ້າຍຊັ້ນຫວາ ! ເພິ່ນມີວຽກຫຍັງ ? " ຄວາມໂມໂຫຂອງອ້າຍຄູຜັນ ມອດມ້ອຍລົງຢ່າງໄວວາ ເມື່ອເຫັນສີໜ້າເຫລ່ຽຂອງກິ. ເຂົາເປັນແນວນີ້ເອງ ໂມໂຫງ່າຍເຊົາໄວ ຄືແປງໄຟຖືກລົມລູ່ ລຸກພືບພັບແລ້ວອ່ອນແສງລົງ ພ້ອມກັບລົມຮວ້າຍ. ຜັນຮູ້ສຶກວ່າ ນັບມື້ຄວາມໃຈຮ້ອນວື່ໆ ແບບອ້າຍບ່າວນັກຮຽນຮູ້ຜູ້ໜຸ່ມນ້ອຍ ນັບຮວ້າຍແຮງລົງ ນັບແຕ່ເຂົາມາຢູ່ໃນເຂດຊົນນະບົດຫ່າງໄກເມືອງໃຫຍ່ແນວນີ້. ການເດີນທາງໄປມາຫາຕົວເມືອງກິນເວລາ ອາໄສລ່ອງໄປມານຳສາຍນ້ຳຊັນ. ຖະໜົນໃຫຍ່ດິນແດງຕັດກາຍບ້ານຢູ່ຟາກນ້ຳອີກເບື້ອງ ໜຶ່ງຮອດສາມຫລັກ. ຊາວບ້ານອາໄສກວຽນແລະເຮືອເປັນພາຫະນະຕົ້ນຕໍ. ມາຢູ່ໃຫມ່ໆ ຜັນຮູ້ສຶກຫມຸດຫມິດບໍ່ພໍໃຈຕໍ່ສະພາບການເດີນທາງໄປມາ ເຂົາຄຶດຄຽດແຄ້ນໃຫ້ຊີວິດ ຄຶດເຫລືອໃຈແທນປະຊາຊົນບ້ານນີ້ ທີ່ຕ້ອງຖືກຕັດຂາດ

ຈາກໂລກພາຍນອກ ຍ້ອນບໍ່ມີຖະໜົນ ຜົນມັກອິດເອື້ອນໄປ ປະຊຸມໃນເມືອງ ເມື່ອມີວຽກກ່ຽວຂ້ອງກັບໂຮງຮຽນ ໂດຍອ້າງວ່າ ໄປມາລຳບາກ. ຄວາມຈິງແລ້ວ ເຂົານັ່ງເຮືອຂ້າມຟາກ ກົ້ນບໍ່ ທັນອຸ່ນຊາ ກໍສາມາດຍ່າງອອກສູ່ຖະໜົນໃຫຍ່ ປະມານຊົ່ວ ໂມງນຶ່ງ ເພື່ອລັດລົດໂດຍສານຂີ່ເຂົ້າໄປໃນເມືອງ ອີກປະມານ 30 ນາທີ ຫລື ບໍ່ກໍຂີ່ເຮືອຈັກຂຶ້ນຕາມນ້ຳຊັນປະມານຊົ່ວໂມງ ກວ່າ ກໍໄປຮອດຫ້ອງການສຶກສາເມືອງ ບ່ອນມີວຽກງານລໍຖ້າ. ຕະຫລອດເວລາເດີນທາງ ທີ່ເຂົາຄິດວ່າຍາກແທ້ຍາກວ່ານັ້ນ ຜົນຊາບໍ່ຮູ້ສຶກເບື່ອໜ່າຍ ເຂົາຂ້າມນ້ຳຊັນດ້ວຍເຮືອພາຍນ້ອຍ ທີ່ນັ່ງໄດ້ປະມານ 4-5 ຄົນ ໂດຍບໍ່ຕ້ອງເສຍຄ່າໂດຍສານ ຄົນ ໝົດບ້ານຮັກແພງເຂົາ ເອີ້ນເຂົາວ່າອ້າຍຄູ, ທຸກຄົນຢາກໃຫ້ເຂົາ ຂຶ້ນເຮືອຮ່ວມທາງ. ທິວທັດສອງຟາກຝັ່ງຂຽວຊື່ນສະອອນຕາ ມັນຂຽວຄຶ້ມ ເປັນເງົາໂງ່ນມີຊີວິດຊີວາ. ທາງຝັ່ງບ້ານມີຕົ້ນພ້າວ ຕົ້ນໝາກ ຂຶ້ນຊອນລອນເໜືອຫລັງຄາເຮືອນ ທີ່ປຸກທ່າງກັນ ຢັ່ງຢາຍຕາມແຄມຝັ່ງແມ່ນ້ຳ. ສ່ວນຝັ່ງກົງກັນຂ້າມແມ່ນສວນ ຢາດູດ ຜັກຊະນິດຕ່າງໆ ແລະສາລີ. ໃນລະດູແລ້ງ ນ້ຳແຫ້ງ ຂອດ ຫາດສີຂາວປົ່ງລາມອອກຈາກສອງຝັ່ງເກືອບຈອດກັນຢູ່ ກາງນ້ຳ ບາງບ່ອນເປັນດອນສູງ ໄທບ້ານຈຶ່ງມາເຮັດສວນຢາ ແລະປູກຜັກໃສ່ ກະແສນ້ຳສີຂຽວໃສບົກເຫືອດລົງ ເຫັນກ້ອນ ຫີນສີຂາວ ແດງດຳ ນອນແນບງຽບສະຫງົບຢູ່ກັບພື້ນນ້ຳ. ຜູ້

ເຖົ້າຜູ້ແກ່ເວົ້າສູ່ຜັນຟັງວ່າ ບໍ່ເຄີຍເຫັນນ້ຳຊຸ່ນມັນແຫ້ງໄວປານນີ້ ທຳມະດາໃນເດືອນຈຽງ - ເດືອນຍີ່ ນີ້ບໍ່ທັນແນມເຫັນກ້ອນຫີນໃນພື້ນນ້ຳດອກ... ຕ້ອງພຸ້ນ ເດືອນຫ້າ ບຸນກຸດສົງການພຸ້ນຈຶ່ງພໍລຸຍນ້ຳອອກໄປຫລິ້ນກາງຫາດໄດ້ ແລະ ອາກາດແຕ່ກ່ອນກໍຊຸ່ມເຢັນຫນາວຈ້ອຍໆກວ່າດຽວນີ້ ຕັ້ງທໍ່ໃດ. ຜັນຢາກຄິດວ່າເຂົາຮູ້ຈັກສາເຫດແຫ່ງການປ່ຽນແປງນີ້ ແລະຜູ້ເຖົ້າຜູ້ແກ່ໄທບ້ານຫາດໂພ ກໍຮູ້ດີ ແຕ່ໃຜໆກໍບໍ່ຍອມເວົ້າຮອດ ໄດ້ແຕ່ຈົ່ມແຕ່ວ່າໃຫ້ຟ້າໃຫ້ດິນພຸ້ນແທນ. ທຸກໆຄັ້ງທີ່ຜັນຕ້ອງເດີນທາງເຂົ້າໃນເມືອງ ເຂົາບໍ່ທັນອິ່ມຕາອິ່ມໃຈນຳທິວທັດສອງຟາກຝັ່ງເທື່ອດອກ ເຮືອນ້ອຍ ກໍພາເຂົາລອຍມາຮອດອີກຝັ່ງນຶ່ງແລ້ວ ຕໍ່ຈາກນັ້ນກໍຈະມີຜູ້ເອີ້ນຊວນຂຶ້ນນັ່ງກວຽນເດີນທາງຕໍ່ອອກໄປສູ່ຖະຫນົນໃຫຍ່ ຖ້າມີຫມູ່ຜູ້ສາວຫາບຜັກ ຫລື ສິນຄ້າອື່ນໆໄປສົ່ງຕະຫລາດ ຜັນກໍຈະຍ່າງເປັນຫມູ່ໄປນຳ ພວກເຂົາທັງເວົ້າລົມ ລຳຢອກໃຍກັນໄປ. ຜັນຄ່ອຍໆລືມໄປວ່າ "ຄວາມຫຍຸ້ງຍາກ" ໃນການເດີນທາງລະຍະເກືອບ 30 ຫລັກ ແຕ່ຫາດໂພ ໄປຫາຕົວເມືອງເປັນແນວໃດ, ເຂົາບໍ່ຄິດຍາກ ຫລື ຕອບວ່າຂີ້ຄ້ານໄປປະຊຸມອີກແລ້ວ.

"ມີຫຍັງຮ້ອນດ່ວນພິລຶກ ຊັ້ນຫວະແມ່ ?" ຜັນຖາມທັນທີເມື່ອກ້າວຂາມົ້ມຫົວຂັ້ນໄດ. ປ້າພອນພວມນັ່ງລົມກັບຜູ້ເຖົ້າ 3-4 ຄົນຢູ່ເຊຍເຮືອນ.

"ເອີ້ ມາແລ້ວເບາະຜັນ !" ປ້າພອນງວາກມາ ເມື່ອໄດ້

ຍິນສຽງຜັນ.

"ນີ້ນ່າ ! ແມ່ຟ້າວມາບອກໄຫບ້ານເຮົາກຽມໂຕ ຊິມີຄະນະຜູ້ແທນມາຢາມບ້ານເຮົາ."

"ຄະນະຜູ້ແທນຊິມາຢາມບ້ານເຮົາຊັ້ນຫວະ ? ຄະນະໃດອີກ ?"

ນໍ້າສຽງຂອງຜັນບອກວ່າ ບໍ່ອອນຊອນນໍາຊື່ຄະນະຜູ້ແທນທໍ່ໃດ.

"ອຸ້ຍ ຄະນະຜູ້ແທນນີ້ ບໍ່ເຄີຍມາເມືອງເຮົາຈັກເທື່ອດອກລູກ... ເພິ່ນຊິມາເຮັດວຽກຢູ່ເຂດເມືອງເຮົາ 3-4 ມື້, ຊິລົງຢ້ຽມຢາມປະຊາຊົນ ເພິ່ນວ່າຊິເກັບອີ່ສັງບຸ ແມ່ບໍ່ຈື່ຄັກປານໃດ ທັງຟ້າວມາແດ່, ປັ້ນເຊົ້ານໍາເພິ່ນ ແລ້ວກໍມາໂລດ."

"ເອີ້... ຊັ້ນເພິ່ນຊິລົງມາບ້ານເຮົາມື້ໃດລະ ?" ຜັນຖາມຊໍ້າເມື່ອໂຍ້ຄືງລົງນັ່ງຮ່ວມວົງສົນທະນານໍາ ແລະເຂົາກໍຍັງບໍ່ທັນເຂົ້າໃຈຄັກວ່າ ແມ່ນຫຍັງເປັນຫຍັງແທ້.

"ມື້ອື່ນເຊົ້າ ! ແມ່ເຊີນພວກເພິ່ນກັບປາກເອງ. ໃນຄະນະນັ້ນເກາະ ຕ່າງຫມູ່ແທ້ໆໃດລູກ ມີແຕ່ຜູ້ຫນຸ່ມໆນ້ອຍໆ ຣຸ່ນຮາວຄາວດຽວກັບລູກນີ້ລະ ມີນາງອັນນຶ່ງຖືກຕາແມ່ຂະຫນາດເລີຍ ຣິ ໆ !" ປ້າພອນເວົ້າ ທ່າທາງສະອອນໃຈ ທັງແນມເບິ່ງຫນ້າລູກຮັກດ້ວຍວາດແວວປະຫລາດ, ຕາມທໍາມະດາແລ້ວປ້າພອນບໍ່ເປັນຄົນມັກເວົ້າຫລາຍຍືດຍາວ ແຕ່ນີ້ຄືວ່າລາວຢາກ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ